**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການແຂວງ

ເລກທີ 870/ຫກຂ.ອປ

ອັດຕະປື, ວັນທີ 31..ຕຸລາ..2016

# ແຈ້ງການ

**ຮຽນ:** ທ່ານຫົວໜ້າ ພະແນກການ, ອົງການທຽບເທົ່າ, ຫົວໜ້າກອງບັນຊາການ ປກສ-ປກຊ ແລະ ເຈົ້າເມືອງ 5 ຕົວເມືອງ ທີ່ນັບຖື!

**ເລື່ອງ:** ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມອົງການປົກຄອງແຂວງຄັ້ງທີ 1 ຊຸດທີ I.

- ອີງຕາມ: ມະຕິຂອງກອງປະຊຸມອົງການປົກຄອງແຂວງຄັ້ງທີ 1 ຊຸດທີ I ສະບັບເລກທີ 1062/ຈຂ.ອປ, ລົງວັນທີ 25 ຕຸລາ ປີ 2016.
- ອີງຕາມ: ທິດຊີ້ນຳຂອງທ່ານເຈົ້າແຂວງເພີ່ມເຕີມ ຢູ່ໃນກອງປະຊຸມ.

ຫ້ອງວ່າການແຂວງອັດຕະປື ຂໍຖືເປັນກຽດແຈ້ງການມາຍັງທ່ານຫົວໜ້າພະແນກການ, ອົງການທຽບເທົ່າ ຫົວໜ້າກອງບັນຊາການ ປກສ-ປກຊ ແລະ ເຈົ້າເມືອງ 5 ຕົວເມືອງ ດັ່ງນີ້:

1. ພະແນກແຜນການ ແລະ ການລົງທຶນແຂວງ ສົມທົບກັບ ພະແນກ ການເງິນແຂວງ: ສືບຕໍ່ປັບປຸງ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ VIII (2016-2020) ແລະ ແຜນລາຍຮັບ-ລາຍຈ່າຍງົບປະມານແຫ່ງລັດ 5 ປີ (2016-2020) ໃຫ້ສອດຄ່ອງກັບມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ, ໂດຍສອດຄ່ອງກັບສະພາບເງື່ອນໄຂຕົວຈິງ; ໃນນີ້ ໃຫ້ສຸມໃສ່ກວດກາຄືນບັນດາຄາດໝາຍສູ້ຊົນທີ່ເຫັນວ່າບໍ່ສອດຄ່ອງກັບເງື່ອນໄຂສະພາບຄວາມເປັນຈິງກັບທ່າແຮງ ແລະ ຄວາມອາດສາມາດຂອງແຂວງ; ຄົ້ນຄວ້າໂຄງການບູລິມະສິດຕົ້ນຕໍສຳລັບ 5 ປີນັບທັງພາກເອກະຊົນ ແລະ ລະດົມທຶນຈາກສາກົນ (ODA) ເຮັດເປັນບັນຊີ ເພື່ອສະເໜີຜ່ານໃນກອງປະຊຸມອົງການປົກຄອງແຂວງ ເດືອນ 11 ປີ 2016.
2. ສະເໜີຮ່າງແຜນການໂຄງການລົງທຶນຂອງລັດ ແລະ ຮ່າງງົບປະມານທີ່ຈະແບ່ງປັນໃຫ້ແຕ່ລະພະແນກການ ແລະ ບັນດາເມືອງໃນປີ 2017 ໃຫ້ມາສະເໜີຕໍ່ກອງປະຊຸມເຈົ້າແຂວງ-ຮອງເຈົ້າແຂວງ ກ່ອນນຳສະເໜີຕໍ່ກອງປະຊຸມສະພາຂັ້ນແຂວງ ເພື່ອຮັບຮອງໃນເດືອນ 11 ປີ 2016.
3. ສົມທົບກັບບັນດາເມືອງທົບທວນຄືນບັນດາຄາດໝາຍສູ້ຊົນ, ເຂດຈຸດສຸມ, ວຽກຈຸດສຸມ, ແຫຼ່ງລາຍຮັບ-ລາຍຈ່າຍ ແລະ ໂຄງການບູລິມະສິດຂອງເມືອງ ສະເໜີໃນກອງປະຊຸມອົງການປົກຄອງ ເດືອນ 12 ເພື່ອມີຄຳເຫັນ

ແລ້ວສະເໜີຕໍ່ກອງປະຊຸມຄົບຄະນະບໍລິຫານງານພັກແຂວງ ເພື່ອມີທິດຊີ້ນໍາ, ມີມະຕິຮັບຮອງຄືນໃໝ່ໃຫ້ຈະແຈ້ງກວ່າເກົ່າ ສອດຄ່ອງກັບມະຕິ X ຂອງສູນກາງພັກ ແລະ ຂອງອົງຄະນະພັກແຂວງ.

4. ພະແນກ ການເງິນແຂວງ ສຸມໃສ່ກວດກາ ແລະ ປະເມີນຖານລາຍຮັບຕາມຄໍາສັ່ງຂອງນາຍົກລັດຖະມົນຕີ ໃຫ້ສໍາເລັດ ແລ້ວລາຍງານໃນກອງປະຊຸມ ເດືອນ 11 ຫຼື ເດືອນ 12 ປີ 2016.

5. ກອງບັນຊາການ ປກຊ, ປກສ, ພະແນກການເງິນແຂວງ ແລະ ພາກສ່ວນກ່ຽວຂ້ອງ ສືບຕໍ່ປະຕິບັດ 3 ວາລະໃຫຍ່ຂອງແຂວງ ໃຫ້ເປັນລະບົບຕໍ່ເນື່ອງ; ໃນນີ້ ໃຫ້ເອົາໃຈໃສ່ບັນຫາທ່າອ່ຽງທີ່ພວມເກີດຂຶ້ນຄືນຄື: ການລັກລອບຫີນປາໂກໄດ, ຫີນຫາດ, ໄມ້ ຫຼື ຊັບພະຍາກອນອື່ນໆ ຕິດພັນກັບການແອບແຝງຂົນສິ່ງເຄື່ອນຍ້າຍສິນຄ້າໄປຕ່າງແຂວງ ຫຼື ສົ່ງອອກຕ່າງປະເທດ.

- ສະເພາະວຽກງານແກ້ໄຂການປະກອບອາຊີບທີ່ບໍ່ຖືກຕ້ອງ ທີ່ພະແນກການເງິນເປັນໃຈກາງນັ້ນ ໃຫ້ສືບຕໍ່ກວດກາໃຫ້ສໍາເລັດທຸກເມືອງ; ໃນນີ້ ຖ້າຈະລົບລ້າງຖະບຽນ ຫຼື ສັນຍາການໂອນກໍາມະສິດ ເປັນຕົ້ນສັນຍາຊື້-ຂາຍດິນ, ຊັບສິນຕ່າງໆ ລະຫວ່າງຄົນລາວກັບຄົນຕ່າງປະເທດ ແມ່ນໃຫ້ປະສານໄປຫາພາກສ່ວນກ່ຽວຂ້ອງຂອງສູນກາງກ່ອນ ເພື່ອໃຫ້ເພິ່ນຊ່ວຍຢືນຢັນທາງລະບຽບກົດໝາຍ ສອດຄ່ອງ ຫຼື ບໍ່? ແລ້ວໃຫ້ເພິ່ນຢັ້ງຢືນແນະນໍາມາ; ວຽກນີ້ໃຫ້ລາຍງານເຈົ້າແຂວງ-ຮອງເຈົ້າແຂວງເປັນປະຈໍາທຸກເດືອນ ຫຼື ທຸກອາທິດ, ທຸກວັນກໍ່ໄດ້ກໍລະນີຮີບດ່ວນ. ຄຽງຄູ່ກັນນີ້ແມ່ນໃຫ້ເອົາໃຈໃສ່ບັນດາພະນັກງານທີ່ແອບແຝງຫາຜົນປະໂຫຍດຈາກວຽກດັ່ງກ່າວນອກກົດໝາຍນໍາຄົນຫວຽດນາມ, ຄົນຈີນ ຫຼື ຜູ້ອື່ນໆ ຖ້າພົບເຫັນແມ່ນຕ້ອງລົງໂທດ.

6. ພະແນກ ພາຍໃນແຂວງ ຄົ້ນຄວ້າຜັນຂະຫຍາຍຄໍາສັ່ງເລກທີ 34/ນຍ ໃຫ້ເປັນອັນລະອຽດ; ຖ້າຈໍາເປັນອອກຂໍ້ກໍານົດ ຫຼື ນິຕິກໍາຂອງແຂວງກໍ່ໄດ້ ໃຫ້ຮີບຮ້ອນນໍາສະເໜີ ລວມທັງຂໍ້ຕົກລົງແຕ່ງຕັ້ງພະນັກງານທີ່ຈະຮັບຜິດຊອບວຽກດັ່ງກ່າວ; ມອບໃຫ້ພະແນກພາຍໃນເປັນໃຈກາງ (ກອງເລຂາ) ວຽກນີ້ຢ່າງຊ້າໃຫ້ສາມາດນໍາສະເໜີໃນກອງປະຊຸມປະຈໍາເດືອນ 12/2016. ສຸມໃສ່ມອບໂອນບັນດາການຈັດຕັ້ງທີ່ຂັ້ນເທິງຕົກລົງແລ້ວໃຫ້ສໍາເລັດ, ແຕ່ຖ້າ ພາກສ່ວນໃດຍັງຫຍຸ້ງຍາກ ກໍ່ສະເໜີລາຍງານຄືນຕໍ່ສູນກາງໂດຍໄວ ເພື່ອມີທິດແກ້ໄຂ.

7. ພະແນກ ການຕ່າງປະເທດແຂວງ: ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກວດກາຄືນແຜນຮ່ວມມື ແລະບັນທຶກສັນຍາກັບບັນດາແຂວງ ຂອງ ສສ ຫວຽດນາມ, ກໍາປູເຈຍ ຫຼື ໄທ ທີ່ມີການພົວພັນກັນແລ້ວ, ສ້າງເປັນວາລະໝົດປີ 2017 ເພື່ອໃຫ້ຂັ້ນເທິງຊີ້ນໍາພາກສ່ວນກ່ຽວຂ້ອງ ແລະ ໃນວຽກໃດທີ່ການນໍາຂັ້ນແຂວງຕ້ອງເຂົ້າຮ່ວມນໍາ, ສະເໜີຕໍ່ກອງປະຊຸມເດືອນ 11 ຫຼື ເດືອນ 12 ປີ 2016 ພິຈາລະນາຕົກລົງ ແລະ ມີທິດໃນການເສີມຂະຫຍາຍການຮ່ວມມື ໃຫ້ມີປະສິດທິຜົນກວ່າເກົ່າ.

8. ພະແນກ ກະສິກໍາ ແລະ ປ່າໄມ້: ໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດຄໍາສັ່ງແນະນໍາຂອງເຈົ້າແຂວງສະບັບເລກທີ 1074/ຈຂ.ອປ, ລົງວັນທີ 27 ຕຸລາ 2016 ກ່ຽວກັບການເພີ່ມທະວີຄວາມຮັບຜິດຊອບຕໍ່ກັບການເກັບກ່ຽວມ້ຽນມັດຜົນຜະລິດລະດູຝົນປີ 2016 ແລະ ການກະກຽມເຂົ້າສູ່ການຜະລິດລະດູແລ້ງສົກປີ 2016-2017 ໃຫ້ໄດ້ດີ; ໃນນີ້ ເຂດຊົນລະປະທານແມ່ນໃຫ້ມີການຜະລິດເປັນລະບົບຕໍ່ເນື່ອງ. ຖ້າອັນໃດຫຍຸ້ງຍາກແມ່ນໃຫ້ລາຍງານຕໍ່ການນໍາຂອງແຂວງໂດຍໄວ ເປັນຕົ້ນ: ການສ້ອມແປງຄອງເໝືອງ, ຢາປາບສະຕູພືດ ຫຼື ອື່ນໆ.

9. ຄະນະຄຸ້ມຄອງໄພພິບັດ ສະຫຼຸບຕີລາຄາກວດກາຄືນມີຜົນກະທົບຫຍັງບໍ່? ໃນລະດູຝົນຜ່ານມາ, ມີບັນຫາອັນໃດຂັ້ນແຂວງແກ້ໄຂ, ອັນໃດຕ້ອງໄດ້ສະເໜີສູນກາງ; ຄົ້ນຄວ້າກະກຽມຕອບໂຕ້ກັບໄພພິບັດທີ່ອາດຈະເກີດຂຶ້ນ

ຫຼັງລະດູຝົນ ໂດຍສະເພາະສະພາບອາກາດໜາວເຢັນ ແລະ ພະຍາດທີ່ມັກລະບາດ. ລົມທົບກັບອົງການຈັດຕັ້ງມະຫາຊົນລະດົມເຄື່ອງນຸ່ງຮົ່ມ, ເຄື່ອງການຮຽນ-ການສອນໄປໃຫ້ເຂດຫຍຸ້ງຍາກ, ເຂດທີ່ມີອາກາດໜາວ ຫຼື ເຂດອື່ນໆ.

10. ໃຫ້ແຕ່ລະເມືອງ, ດ່ານສາກົນພູເກືອ, ດ່ານທ້ອງຖິ່ນຕ່າງໆ ພາຍໃນແຂວງ ເກັບກໍາສັງລວມສະພາບທີ່ເກີດສຸກເສີນໃນຂອບເຂດຂອງຕົນຮັບຜິດຊອບ ລາຍງານຕໍ່ຫ້ອງວ່າການແຂວງເປັນປະຈໍາທຸກວັນຖ້າມີ (ສົ່ງຂໍ້ມູນໂດຍກົງໃຫ້ຂະແໜງເລຂາ ແລະ ຫົວໜ້າຫ້ອງວ່າການແຂວງ ຕາມເບີໂທ: ທ່ານຫົວໜ້າຫ້ອງວ່າການແຂວງ 020 55543255, ທ່ານຫົວໜ້າຂະແໜງເລຂາ 020 22932498 ຫຼື ລາຍງານໂດຍກົງຕໍ່ທ່ານເຈົ້າແຂວງກໍ່ໄດ້).

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານຫົວໜ້າພະແນກການ, ອົງການ, ຄະນະປກຊ-ປກສ ແລະ ເມືອງ 5 ເມືອງ ຈົ່ງພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ຮຽນມາ ດ້ວຍຄວາມນັບຖືເປັນຢ່າງສູງ.

ຫົວໜ້າຫ້ອງວ່າການແຂວງ

ທະນູໄຊ ບັນຊາລິດ

+ ບ່ອນສົ່ງ:

- ທ່ານຄະນະປະຈໍາພັກແຂວງ ທ່ານລະ 1 ສະບັບ ເພື່ອຊາບ.
- ບັນດາພະແນກການ, ກົມກອງລະ 1 ສະບັບ ເພື່ອ ຮັບຊາບ ແລະ ຈັດຕັ້ງປະຕິບັດ.
- ບັນດາເມືອງ ລະ 1 ສະບັບ ເພື່ອຈັດຕັ້ງປະຕິບັດ.
- ຂະແໜງຄົ້ນຄວ້າ-ສັງລວມລັດ (ຫວກ) 1 ສະບັບ ເພື່ອຕິດຕາມ.
- ສໍານັກເກັບຮັກສາໄວ້ 1 ສະບັບ.